# ໜັງສືຈົດເຊັນບັນຊີ (ໜັງສືຈຳນວນບັນຊີ)

ໃຈຄວາມສຳຄັນ: ການປໍຣະບັດ

ຂໍ້ຄວາມສຳຄັນ: ໑໔:໒໗

ຈຳນວນບົດ: ໓໖ ບົດ

ຜູ້ຂຽນ: ທ່ານໂມເຊ

## ໑. ຄຳນຳ

ເຫດການທີ່ຂຽນໄວ້ໃນໜັງສືເຫລັ້ມນີ້ເປັນເຣື່ອງທີ່ເກີດຂຶ້ນກັບຄົນອິສຣາເອັນ (ພວກຂອງພຣະເຈົ້າ) ຈຶ່ງບໍ່ສາມາດປະພຶດຕາມແຜນການຂອງພຣະເຈົ້າຄື ພຣະປະສົງຂອງພຣະອົງແມ່ນຢາກໃຫ້ພວກເຂົາຜ່ານປ່າດິນຊາຍເຂົ້າໄປໃນປະເທດການາອານໄວໆ ແຕ່ດ້ວຍຄວາມບໍ່ເຊື່ອຟັງພວກເຂົາຈຶ່ງຕົກຄ້າງຢູ່ໃນປ່າດິນຊາຍເຖິງ ໔໐ ປີ ແລະໜັງສືນີ້ໄດ້ເຫລົ່າປະວັດການເດີນທາງຂອງພວກອິສຣາເອັນ ຕັ້ງແຕ່ສໄມຕາວອອກມາຈາກພູເຂົາຊິນາຍຈົນຮອດທີ່ຣາບພຽງໂມອາບ.

## ໒. ພາບຈົ່ມທຸກຂອງພວກອິສຣາເອັນ

ໜັງສືນີ້ໄດ້ເຫລົ່າການຈົ່ມທຸກຂອງພວກອິສຣາເອັນໄວ້ດັ່ງນີ້:

໑. ບົດທີ ໑໑ ເຣື່ອງອາຫານການກິນ

໒. „ ໑໒ ການຈົ່ມທຸກຂອງນາງມິລິອາມ

໓. „ ໑໓–໑໔ ເມື່ອໄດ້ຍິນລາຍງານຈາກສອດແນມ

໔. ,, ໑໖ ເມື່ອທ່ານໂກເຣເປັນຂະບົດຂຶ້ນສູ້ທ່ານອາໂຣນ

໕. ,, ໒໐ ເມື່ອຂາດເຂີນນ້າຢູ່ເມລິບາ

໖. ,, ໒໑ ເມື່ອງພິດທຳຮ້າຍພວກເຂົາ

## ໓. ຂໍ້ປຽບທຽບ

໑. ການຕີຫີນດານ ໃນໜັງສືອົພຍົກບົດທີ ໑໗:໖ ມີເຣື່ອງກ່ຽວກັບຫີນດານທີ່ໂມເຊໄດ້ຕີ ແຕ່ໃນບົດທີ ໒໐ ຂອງໜັງສືນັບກົມເຣື່ອງນອກ ຄືທ່ານໂມເຊໄດ້ຕີທີ ໒ ໂດຍຜິດຄຳສັ່ງຂອງພຣະເຈົ້າ ຊຶ່ງພຣະເຈົ້າຊົງສັ່ງໃຫ້ຂໍນ້ຳກັບຈາກຫີນນັ້ນ ແຕ່ທ່ານໂມເຊໄດ້ຕີເປັນເທື່ອທີສອງ ແລະໃນໂກລິນໂທທີ່ນຶ່ງ ບົດ ທີ ໑໐:໔ ກໍບອກວ່າ ພຣະເຢຊູຄຣິດຊົງເປັນຫີນດານ

໒. ເມກ ໃນບົດທີ ໙:໑໕-໒໓ ໝາຍເຖິງພຣະເຢຊູຊົງນຳພວກເຮົາໄປດ້ວຍພຣະວິນຍານບໍລິສຸດ (ໂຢຮັນ ໑໖:໑໓)

໓. ມານາ ໃນບົດທີ ໑໑:໔-໙ ໝາຍເຖິງພຣະເຢຊູຜູ້ຊົງເປັນເຂົ້າຈີ່ແຫ່ງຊີວິດຂອງພວກເຮົາ (ໂຢຮັນ ບົດ ໖:໓໑ ຕໍ່ ໆ ໄປ)

໔. ໄມ້ແສ້ຂອງອາໂຣນ ໃນບົດທີ ໑໗:໑-໑໑ ທີ່ໄດ້ເກີດເຜັນ ອອກ ໄມ້ ນັ້ນ ໝາຍ ເຖິງ ການ ຄືນ ມາ ຈາກ ຕາຍ ຂອງພຣະເຢຊູຄຣິດ ຊຶ່ງພິສູດເຖິງຄວາມເປັນພຣະເຈົ້າຂອງພຣະອົງ (ໂຣມ ໑:໔)

ຈ. ງົວສີແດງ ໃນບົດທີ ໑໙:໑–໑໐ ໝາຍເຖິງພຣະເຢຊູ ຊົງຍົກໂທດແລະບາບຂອງພວກເຮົາ (ເຮັບເຣີ ໙:໑໓–໑໔)

ສ. ຮູບງູທີ່ເຮັດດ້ວຍທອງເຫລືອງ ໃນບົດທີ ໒໑:໔–໙ ພຣະເຢຊູເອງໄດ້ຊົງບອກວ່າ ເປັນເຣື່ອງອຸປມາເຖິງໄມ້ກາງແຂນ ບ່ອນພຣະອົງຊົງຮັບເອົາບາບແລະຖືກຮັບເອົາຄວາມຕາຍຂອງພວກເຮົາ (ໂຢຮັນ ໓:໑໔–໑໕)

ຊ. ທີ່ເພິ່ງອາສັຍ ໃນບົດທີ ໓໕:໙–໒໘ ໝາຍເຖິງຜູ້ຂ້າຄົນໂດຍບໍ່ມີເຈດຕນາເຂົ້າໄປອາໄສຢູ່ໃນເມືອງນັ້ນ ເພື່ອຈະຫລົບໂທດ ຄືພຣະເຢຊູຊົງເປັນທີ່ເພິ່ງຂອງຄົນບາບທັງປວງ

໔. ບົດສຳຄັນ

ບົດທີ ໙ ວ່າດ້ວຍເມກຊົງນຳໄປ

,, ໑໑ ພຣະເຈົ້າຊົງໂຜດນົກຂຸ້ມໃຫ້ເປັນອາຫານ

,, ໑໒ ນາງມີຣີອາມກັບທ່ານອາໂຣນຈົ່ມທຸກຕໍ່ທ່ານໂມເຊ

,, ໑໓ ພວກສອດແນມສິບສອງຄົນໄປທີ່ປະເທດການາອານ

,, ໑໔ ການຍົກຕົວເອງຂຶ້ນຂອງທ່ານໂກເຣ

,, ໒໑ ງູພິດທັງຫລາຍ

,, ໒໒–໒໔ ເຣື່ອງທ່ານບາລາອາມ

໕. ການແບ່ງເປັນພາກ

ພາກທີ ໑. ການຈັດຕຽມພື່ອອກຈາກພູເຂົາຊີນາຍ

ບົດ ໑–໑໐:໑໐

,, ໒. ການເດີນທາງໄປຍັງເມືອງກາເດເຊ

ບົດ ໑໐:໑໑–໑໔

,, ໓. ການຢຸດພັກທີ່ເມືອງກາເດເຊ ບົດ ໑໕–໑໗

,, ໔. ການກັບຄືນມາຍັງທີ່ຣາບໂມອາບ

ບົດ ໒໐–໓໙